Australian Government
Australian Centre for
International Agricultural Research

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມ ໃນການຂະຫຍາຍ ການລ້ຽງສັດໃນ ເຂດພາກເໜືອ ຂອງ ສປປ ລາວ



## ພືດອາຫານສັດສາມາດຫັນການລ້ຽງສັດນ້ອຍ ກ້າວສູ່ການລ້ຽງສັດໃຫຍ່

ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກຳ - ປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ສ ປ ປ ລາວ

ກ.ສ.ກ.ປ NAFES

Charles Sturt University
INSTITUTE FOR LAND, WATER AND SOCIETY

ຊື່ ທ້າວ ທວາເຊັ່ງຢາງ ອາຍຸ 38 ປີ ເປັນຊາວກະສິກອນຊົນເຜົ່າມົ້ງ, ຢູ່ບ້ານໄຊອຸດົມ, ເມືອງພາອຸດົມ ແຂວງບໍ່ແກ້ວ ຢູ່ພາຍ ໃນຄອບຄົວຂອງລາວມີສະມາ ຊິກທັງໝົດ 11 ຄົນ ແລະ ມີແຮງງານຕົ້ນຕໍ 2 ແຮງງານ, ໃນເມື່ອກ່ອນລາວມີອາຊີບ ເຮັດໄຮ່, ເຮັດສວນ ແລະ ເຮັດນາອີກຈຳນວນໜຶ່ງ ແຕ່ຜົນຜະລິດທີ່ໄດ້ ຮັບແມ່ນໜ້ອຍ, ການລ້ຽງສັດຂອງລາວໃນເມື່ອກ່ອນ ແມ່ນຈະລ້ຽງປ່ອຍຕາມທຳມະຊາດຕະຫຼອດປີ ເຊັ່ນ: ການລ້ຽງໝູຂອງລາວນັ້ນ ແມ່ນເກືອແຕ່ຮຳ ແລະ ພືດຜັກ ຕ່າງໆເຊັ່ນ: ບອນ, ຜັກຫົມ ແລະ ຕົ້ນກ້ວຍ ທີ່ຫາໄດ້ຕາມທຳມະຊາດ ໃນແຕ່ລະມື້ ດັ່ງນັ້ນຈຶ່ງເຮັດໃຫ້ ໝູຂອງລາວນານໃຫ່ຍ, ໝູບໍ່ໄດ້ສັກຢາປ້ອງກັນພະຍາດ ແລະ ບໍ່ໄດ້ຂ້າແມ່ທ້ອງ ຈຶ່ງເຮັດໃຫ້ໝູຈ່ອຍ, ຂາຍບໍ່ໄດ້ລາຄາ ດີ ແລະ ສັດຕາຍໂດຍບໍ່ຮູ້. ສາຍເຫດ.



ໃນປີ 2006 ທາງໂຄງການກໍ່ສ້າງບຸກຄະລາກອນໄດ້ເຂົ້າມາສົ່ງເສີມຢູ່ເມືອງພາອຸດົມ, ແຂວງບໍ່ແກ້ວ ແລະ ໄດ້ເລືອກ ເອົາບ້ານໄຊອຸດົມ ເປັນບ້ານເປົ້າໝາຍຂອງໂຄງການ ເຊິ່ງກິດຈະກຳທີ່ທາງໂຄງການໄດ້ນຳເຂົ້າ ມາສົ່ງເສີມຊາວບ້ານນັ້ນ ແມ່ນກ່ຽວກັບການລ້ຽງສັດ ໂດຍສະເພາະແມ່ນການປູກພືດອາຫານສັດ ເພື່ອລ້ຽງສັດ ເປັນຕົ້ນແມ່ນງົວ, ຄວາຍ ແລະ ໝູ. ດັ່ງນັ້ນ ທ້າວທວາເຊັ່ງຢ່າງ ໄດ້ຕັດສິນໃຈເຂົ້າຮ່ວມ ກິດຈະກຳການປູກພືດອາຫານສັດນຳໂຄງການ ເຊິ່ງມີພຽງແຕ່ ຄອບຄົວລາວຜູ້ດຽວ ທີ່ສະມັກເຂົ້າຮ່ວມ ໂຄງການ, ພືດອາຫານສັດ ທີ່ນຳມາປູກນັ້ນ ມີ 5 ຊະນິດຄື: ຖົ່ວສະໄຕໂລ, ຫຍ້າກີນີສີມ່ວງ, ປັດສະປາລອມ, ມູລະໂຕ, ປູີເຊັນຕ້າ, ຊຶ່ງມີເນື້ອທີ່ 0.09 ເຮັກຕາ ເທົ່ານັ້ນ.



ໃນທ້າຍປີ 2006 ນັກວິຊາການໄດ້ລົງມານຳພາລາວສ້າງຄອກໝູຈຳນວນ 1 ຄອກ ຈາກນັ້ນລາວກໍ່ໄດ້ເອົາໝູຂື້ນຄອກ ແລະ ກໍ່ໄດ້ເລີ່ມນຳໃຊ້ ຖົ່ວສະໄຕໂລໃຫ້ໝູກິນ ເພາະວ່າລາວມີແຕ່ໝູ 1 ໂຕ ເທົ່ານັ້ນ, ໃນເບື້ອງຕົ້ນນັກວິຊາການໄດ້ລົງມາແນະນຳ ວິທີການຕັດຖົ່ວສະໄຕໂລ, ວິທີການຊອຍ ແລະ ວິທີການເກືອ ພ້ອມທັງວິທີການຂ້າແມ່ທ້ອງ, ການສັກຢາປ້ອງກັນ, ນັກວິຊາການໄດ້ສາທິດ ວິທີການຕັດຖົ່ວສະໄຕໂລ, ການຕັດແມ່ນສູງຈາກໜ້າດິນ 15 - 20 ຊັງຕີແມດ ແນະນຳວິທີການຊອຍຊຶ່ງມີຂະໜາດ 1 ມົນ, ແລ້ວປະສົມກັບຮຳໃນອັດຕາສ່ວນຮຳ 2 ກິໂລ / ຖົ່ວສະໄຕໂລ 4 ກິໂລ ປະສົມກັບນ້ຳຄົນໃຫ້ເຂົ້າກັນ ແລ້ວນຳໄປເກືອ. ຫຼັງຈາກນັກວິຊາການລົງມາເຮັດໃຫ້ເບິ່ງແລ້ວ, ຈາກນັ້ນລາວໄດ້ເຮັດຕາມຄຳແນະນຳຂອງ ນັກວິຊາການ ເປັນປະຈຳ. ເມື່ອລາວເກືອໝູດ້ວຍຖົ່ວສະໄຕໂລເປັນປະຈຳຕລອດໃນໄລຍະ 3 ເດືອນ ລາວເຫັນວ່າໝູຂອງລາວ ມີການຈະເລີນເຕີບໂຕໄວ ແລະ ຕຸ້ຍດີ

ຈາກນັ້ນລາວໄດ້ຂາຍໃນລາຄາ 1,000,000 ກີບ ເມື່ອເຫັນວ່າໄດ້ກຳໄລດີ ລາວຈຶ່ງໄດ້ຕັດສິນໃຈ ຊື້ໝູເຂົ້າມາທອມອີກ ໃນ ປີ 2007 ລາວທອມໝູຂາຍໄດ້ທັງໝົດຈຳນວນ 7 ຊຸດ, ມີໝູທັງໝົດ 27 ໂຕ ລາວທອມພຽງແຕ່ 4 ໂຕ / ຊຸດ ແລະໃຊ້ເວລາ ທອມພຽງ 3 ເດືອນ ກໍ່ຂາຍອອກ ລາວໃຊ້ຕົ້ນທຶນທັງໝົດ 6,800,000 ກີບ ເມື່ອຂາຍລາວໄດ້ກຳໄລ ທັງໝົດ 8,350,000 ກີບ ເງິນທີ່ໄດ້ຈາກການຂາຍໝູ ລາວເອົາມາປຸກເຮືອນໃໝ່ ແລະ ໃຊ້ຈ່າຍເຂົ້າໃນຄອບຄົວອີກ ສ່ວນຍັງເຫຼືອ ລາວຍັງໄດ້ຊື້ໝູເຂົ້າມາ ລ້ຽງຕື່ມອີກ 2 ໂຕ ໃນລາຄາ 672,000 ກີບ ແຕ່ ລາວຢາກໄດ້ໝູມາທອມ ໃຫ້ຫຼາຍກ່ວາເກົ່າ ລາວຈຶ່ງໄປຢືມເງິນ ຈາກຫົວໜ້າ ໂຄງການ ຂັ້ນແຂວງ ຈຳນວນ 1,680,000 ກີບ ແລະໄດ້ຊື້ໝູອີກ 5 ໂຕ ໃນລາຄາ 1,680,000 ກີບ ລາວມມີ ໝູ 7 ໂຕ ລວມຕົ້ນທຶນ ຈຳນວນ 2,352,000 ກີບ ຫລັງຈາກລ້ຽງທອມ 3 ເດືອນ ແລ້ວຂາຍອອກໄດ້ກຳໄລ ທັງໝົດ 3,500,000 ກີບ ຕໍ່ມາລາວມີແນວຄິດ ຢາກລ້ຽງສັດໃຫ່ຍລອງເບິ່ງລາວເລີຍຕັດສິນໃຈ ເອົາເງິນສ່ວນທີ່ໄດ້ນັ້ນມາຊື້ງົວອີກຈຳນວນ 1 ໂຕ ໃນລາຄາ 1,820,000 ກີບ ເພື່ອເອົາມາລ້ຽງໂດຍນຳໃຊ້ ພືດອາຫານສັດທີ່ໄດ້ປູກ ໄວ້ໃນເບື້ອງຕົ້ນ ນັກວິຊາການ ໄດ້ລົງມາແນະນຳ ໃຫ້ເຮັດຄອກ ແລະຮາງອາຫານ ຕະຫຼອດຮອດວິທີການຕັດ, ການເກືອໃນ ອັດຕາສ່ວນຄາບໜຶ່ງ ໃຫ້ກິນ10 -12 ກິໂລ / ນ້ຳໜັກໂຕ ໂດຍຈະຕັດຫຍ້າເປັນຕ່ອນນ້ອຍໆ ປະມານ 2- 3 ຊັງຕີແມັດຈາກນັ້ນກໍ່ ເອົາໃສ່ຮາງໃຫ້ກິນ ພ້ອມທັງສັກຢາປ້ອງກັນ, ຂ້າແມ່ແມ່ທ້ອງ ແລະ ໃຫ້ຢາບຳລຸງຕ່າງໆ ລາວໄດ້ໃຊ້ເວລາທອມພຽງແຕ່ 5 ເດືອນ ກໍ່ສາມາດຂາຍອອກ ໄດ້ເງິນຈຳນວນ 2,240,000 ກີບ ຫຼັງຈາກຂາຍງົວແລ້ວ ລາວໄດ້ຊື້ຄວາຍເຂົ້າມາລ້ຽງແທນ ໃນຈຳນວນ 2 ໂຕ ໃນລາຄາ 4,880,000 ກີບ ສ່ວນວ່າ ວິທີການລ້ຽງນັ້ນ ລາວໄດ້ເຮັດວິທີດຽວກັບການລ້ຽງງົວ ແຕ່ວ່າຄວາຍຈະກິນຫຼາຍກ່ວາລາວໃຫ້ກິນໃນອັດຕາສ່ວນ 15-20 ກິໂລ/ນ້ຳໜັກໂຕ ຕາມນັກວິຊາການໄດ້ແນະນຳ ໃນຕໍ່ໜ້າລາວຈະຂະຫຍາຍສວນຫ້ຍາໃຫ້ໄດ້ 1 - 2 ເຮັກຕາ ແລະ ຈະຊື້ໝູ, ຄວາຍເຂົ້າມາລ້ຽງໃຫ້ຫຼາຍຂື້ນກ່ວາເກົ່າອີກ ໃນປັດຈຸບັນນີ້ ລາວມີ ໝູທັງໝົດ 9 ໂຕ, ໝູແມ່ 2 ໂຕ, ໝູແມ່ໂຕໜຶ່ງເກີດລູກໄດ້ 7 ໂຕ, ແລະ ມີຄວາຍຈຳນວນ 3 ໂຕ.



**ຄຳເຫັນ:**

ຂ້າພະເຈົ້າມີຄວາມດີໃຈຫຼາຍ ທີ່ທາງໂຄງການໄດ້ມາແນະນຳວິທີການລ້ຽງສັດ ເຮັດໃຫ້ຊີວິດການເປັນຢູ່ ຂອງຄອບຄົວຂ້າພະເຈົ້າດີຂື້ນ ກ່ອນເຂົ້າຮ່ວມໂຄງການ ແມ່ນມີລາຍຮັບໜ້ອຍ ບໍ່ມີເງິນສົ່ງລູກ ເຂົ້າໂຮງຮຽນ ໄດ້ໝົດທຸກຄືນ ພາຍຫຼັງທີ່ໄດ້ເຂົ້າຮ່ວມໂຄງການ ຄອບຄົວຂອງຂ້າພະເຈົ້າ ມີລາຍຮັບຈາກການຂາຍສັດ ໃນປີໜຶ່ງ ບໍ່ຕໍ່າກ່ວາ 3,000,000 ກີບ ນັບຕັ້ງແຕ່ ຂ້າພະເຈົ້າທອມໝູຂາຍໃນໄລຍະ 3 ປີກ່ວາ ໄດ້ເງິນທັງໝົດ 11,850,000 ກີບ ແລະຂາຍງົວ 1 ໂຕ 2,240,000 ກີບ ລວມເງິນທີ່ໄດ້ຈາກການຂາຍສັດທັງໝົດ 14, 090,000 ກີບ ນອກຈາກນີ້ ຂ້າພະເຈົ້າຍັງມີເວລາໄປເຮັດວຽກອື່ນອີກ ແລະ ຫຼຸດຜ່ອນໃນການໄປຫາອາຫານສັດຕາມທຳມະຊາດຕື່ມອີກ.




## ແຜນການໃນຕໍ່ໜ້າ

1. ຈະຂະຫຍາຍເນື້ອທີ່ສວນພືດອາຫານສັດອອກ ໃຫ້ໄດ້ 1 - 2 ເຮັກຕາ.
2. ສ້າງຄອກສັດລ້ຽງໃຫ້ໄດ້ ໂດຍສະເພາະແມ່ນ ຄອກຄວາຍ ແລະ ຊື້ຄວາຍເຂົ້າມາທອມໃຫ້ໄດ້ 5 ໂຕ / ປີ .
3. ຈະສ້າງຄອກໝູໃຫ້ມັນໄດ້ 1 ຄອກ ແລະ ພ້ອມນີ້ຈະທອມໝູ ໃຫ້ໄດ້ 20 ໂຕ / ປີ.

ສາມາດຕິດຕໍ່ພົວພັນໄດ້ທີ່.

➪ ບ່ອນປະຈຳການ: ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງພາອຸດົມ, ແຂວງບໍ່ແກ້ວ

➪ ນາງ ບົວສອນ ດາວພະຈັນ

➪ ໂທລະສັບ: 020 6842506

➪ ແຟັກ 030 512 0 512

Australian Government
Australian Centre for
International Agricultural Research

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມ ໃນການຂະຫຍາຍ ການລ້ຽງສັດໃນ ເຂດພາກເໜືອ ຂອງ ສປປ ລາວ




**ຖົ່ວສະໄຕໂລເຮັດໃຫ້ເວລາການລ້ຽງໝູຂາຍສັ້ນລົງ**

ຈັດຕັ້ງປະຕິບັດໂດຍກອງສົ່ງເສີມກະສິກຳ - ປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ສ ປ ປ ລາວ

ກ.ສ.ກ.ປ NAFES

Charles Sturt University INSTITUTE FOR LAND, WATER AND SOCIETY

ລຸງວັນ ອາຍຸ 55 ປີ ເປັນຊາວກະສິກອນ ຊົນເຜົ່າລະເມດ ຢູ່ບ້ານ ປາງທອງ, ເມືອງ ຜາອຸດົມ, ແຂວງ ບໍ່ແກ້ວ ຄອບຄົວຂອງລາວມີຈຳນວນ 6 ຄົນ ແຮງງານຕົ້ນຕໍມີ 2 ແຮງງານ ໃນເມື່ອກ່ອນຄອບຄົວຂອງລາວ ມີອາຊີບຖາງປ່າເຮັດໄຮ່ ເພື່ອປູກເຂົ້າ, ພ້ອມທັງການເຮັດສວນ ແລະ ປູກພືດຕ່າງໆທີ່ເປັນສິນຄ້າແຕ່ຜົນຜະລິດນັ້ນ ຍັງບໍ່ພຽງພໍກັບຄວາມຕ້ອງ ການບໍລິໂພກ.

ນອກຈາກເຮັດໄຮ່ ແລະ ສວນແລ້ວ ລາວຍັງໄດ້ລ້ຽງສັດເປັນອາຊີບສຳຮອງ ເຊິ່ງແຕ່ກ່ອນການລ້ຽງສັດແມ່ນນຳໃຊ້ ພຽງແຕ່ອາຫານ ທີ່ມີຢູ່ຕາມທຳມະຊາດ ຄື: ຊອກຫາພືດຜັກຕ່າງໆເຊັ່ນ: ບອນ, ຜັກຫົມ, ເພື່ອເອົາມາຕົ້ມເປັນອາຫານເສີມ ການໄປຊອກແມ່ນໃຊ້ເວລາ 2-3 ຊົ່ວໂມງ ການເກືອນັ້ນກໍ່ເອົາໄປປະສົມກັບຮຳ ແລະ ນ້ຳ ໂດຍບໍ່ມີອັດຕາການປະສົມອາຫານຫຍັງເລີຍ ແລ້ວເອົາໄປໃຫ້ໝູກິນ.

ເຫດຜົນດັ່ງກ່າວ ຈຶ່ງມີສາຍເຫດ ເຮັດໃຫ້ໝູຂາດອາຫານ, ໃຫຍ່ຊ້າ, ບໍ່ໄດ້ຮັບການສັກຢາປ້ອງກັນພະຍາດ ແລະ ບໍ່ໄດ້ຂ້າແມ່ທ້ອງ ຈຶ່ງເຮັດໃຫ້ສັດຕາຍໂດຍບໍ່ຮູ້ສາເຫດ, ຂາຍໝູບໍ່ໄດ້ລາຄາດີ.

ຕົກມາຮອດປີ 2006 ລາວໄດ້ເຂົ້າຮ່ວມກິດຈະກຳ ການປູກພືດອາຫານສັດ ນຳໂຄງການກໍ່ສ້າງບຸກຄະລາກອນ ຄອບຄົວຂອງລາວກໍ່ໄດ້ປູກພືດອາຫານສັດ (ຖົ່ວສະໄຕໂລ) ໃນເນື້ອທີ່ 0,04 ເຮັກຕາ ຫຼັງຈາກໄດ້ປູກພືດອາຫານສັດແລ້ວ ນັກວິຊາການໄດ້ລົງມາແນະນຳ ການນຳໃຊ້ພືດອາຫານສັດເຊັ່ນ: ຖົ່ວສະໄຕໂລ ເປັນອາຫານເສີມໃນການລ້ຽງໝູ ສ່ວນແນວພັນສັດເປັນຂອງຕົນເອງ ໃນຈຳນວນ 1 ໂຕ ທາງໂຄງການ ໄດ້ມີ ນັກວິຊາການລົງມາແນະນຳ ວິທີການລ້ຽງ, ວິທີການສ້າງຄອກໝູ ແລະ ວິທີການໃຫ້ອາຫານ, ການຮັກສາສຸຂະພາບສັດ ແລະ ວິທີການນຳໃຊ້ຖົ່ວສະໄຕໂລ.




ເປັນຕົ້ນແມ່ນ ວິທີການຕັດຖົ່ວສະໄຕໂລ ໃນສວນການຕັດແມ່ນ ໃຫ້ສູງຈາກໜ້າດິນ ປະ ມານ 15 - 20 ຊັງຕີແມັດ ເພື່ອໃຫ້ຖົ່ວສະໄຕໂລ ປົ່ງຂຶ້ນໄວ ພອ້ມທັງແນະນຳວິທີການຊອຍແມ່ນໃຫ້ຊອຍ ໃນຂະໜາດ 1 ນິ້ວ ປະສົມກັບຮຳໃນອັດຕາສ່ວນຖົ່ວສະໄຕໂລ 4 ກິໂລ/ ຮຳ 2 ກິໂລ ປະສົມກັບນ້ຳ ຄົນໃຫ້ເຂົ້າກັນ ແລ້ວຕັກໃສ່ຮາງໃຫ້ໝູກິນຄື: 2 ກິໂລຕໍ່ໂຕ ພ້ອມທັງແນະນຳ ວິທີການສັກຢາ ປ້ອງກັນພະຍາດ, ການຂ້າແມ່ທ້ອງຕື່ມອີກ.

ນອກຈາກນີ້ແລ້ວ ຍັງໄດ້ແນະນຳວິທີການເຮັດຖົ່ວສະໄຕໂລແຫ້ງ ໂດຍການຊອຍໃຫ້ມຸ່ນ ແລ້ວນຳໄປຕາກແດດໃຫ້ແຫ້ງດີ ຫຼັງຈາກນັ້ນກໍ່ເກັບມ້ຽນໃສ່

ເປົ່າໄວ້ ໃຫ້ໝູກິນໃນຍາມແລ້ງເມື່ອ ເຫັນວ່າການນຳໃຊ້ຖົ່ວສະໄຕໂລລ້ຽງສັດ ມີການຈະເລີນເຕີບໂຕດີ ແລະ ຂາຍໄດ້ລາຄາດີ ຫຼັງຈາກນັ້ນ ລາວກໍ່ໄດ້ຂະຫຍາຍສວນ ພືດອາຫານສັດອອກຕື່ມ ໃນເນື້ອທີ່ປະມານ 0,07 ເຮັກຕາ.



ມາຮອດໃນປີ 2007 ລາວໄດ້ຊື້ໝູ 1 ໂຕ ໃນລາຄາ 1,400,000 ກີບ ມາລ້ຽງເພື່ອເປັນແມ່ພັນ ວິທີການລ້ຽງ ຂອງລາວ ແມ່ນໄດ້ປະຕິບັດຕາມຄຳແນະນຳຂອງ ນັກວິຊາການຈາກຂັ້ນເມືອງ ແລະ ຂັ້ນແຂວງ ຂອງເມືອງຜາອຸດົມ.

ໂດຍການນຳໃຊ້ ຖົ່ວສະໄຕໂລ ເປັນອາຫານເສີມ ລາວລ້ຽງໄດ້ພຽງ 3 ເດືອນ ໝູຂອງລາວກໍ່ເກີດລູກ ຈຳນວນ 10 ໂຕ ຫຼັງຈາກລູກໝູຢ່ານົມແລ້ວ ລາວກໍ່ທອມໝູນ້ອຍຈຳນວນ 10 ໂຕ ນັ້ນລ້ຽງພຽງແຕ່ 3 ເດືອນ ກໍ່ສາມາດຂາຍອອກ ລາວຂາຍຈຳນວນ 9 ໂຕ ສ້າງລາຍຮັບໄດ້ 1,540,000 ກີບ ແລະ ປະໄວ້ 1 ໂຕ ສຳລັບລ້ຽງເປັນແມ່ພັນ ຈາກນັ້ນ ລາວກໍ່ມີໝູແມ່ 2 ໂຕ ລາວລ້ຽງໄດ້ໃນຊ່ວງໄລຍະໃດໜຶ່ງ ໝູຂອງລາວກໍ່ເກີດລູກຕື່ມອີກ 17 ໂຕ ລາວໄດ້ທອມ ໝູນ້ອຍທັງໝົດທີ່ເກີດມານັ້ນພຽງແຕ່ 3 ເດືອນ ກໍ່ຂາຍອອກຈຳນວນ 18 ໂຕ ( ແມ່ 1 ໂຕ ແລະ ລູກຈຳນວນ 17 ໂຕ) ໄດ້ເງິນທັງໝົດ 3,332,000 ກີບ ລາວຂາຍໝູທັງໝົດ 2 ຄັ້ງ ມີໝູ 27 ໂຕ ລວມເງິນທັງໝົດ 4,860,000 ກີບ ໄດ້ກຳໄລທັງໝົດ 3,460,000 ກີບ.




ມາຮອດປີ 2008 ຢູ່ພາຍໃນຄອບຄົວຂອງລາວຍັງມີໝູແມ່ 1 ໂຕ ແລະໄດ້ເກີດລູກຕື່ມອີກ 7 ໂຕ , ລາວກຽມພ້ອມທີ່ຈະທອມ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວຂອງລາວ ໃຫ້ກາຍເປັນຄອບຄົວ ທີ່ຫລຸດພົ້ນຈາກຄວາມທຸກຍາກເທື່ອລະກ້າວ ເນື່ອງຈາກໄດ້ການຊ່ວຍເຫຼືອ ຂອງໂຄງການ ກໍ່ສ້າງບຸກຄະລາກອນ ກໍ່ຄືພະນັກງານວິຊາການຈາກເມືອງ ແລະ ແຂວງ ທີ່ປະຈຳ ເມືອງ ຜາອຸດົມ, ແຂວງ ບໍ່ແກ້ວ.

## ຄວາມຄິດເຫັນຂອງຜູ້ກ່ຽວ

ແຕ່ກ່ອນ ຄອບຄົວຂອງຂ້າພະເຈົ້າ ຍັງບໍ່ທັນໄດ້ເຂົ້າຮ່ວມໂຄງການ ກໍ່ສ້າງບຸກຄະລາກອນ ແມ່ນບໍ່ມີລາຍຮັບເຂົ້າຄອບຄົວຂອງຂ້າພະເຈົ້າ ພາຍຫຼັງທີ່ໄດ້ເຂົ້າຮ່ວມ ກິດຈະກຳ ການປູກພືດອາ ຫານສັດ ຂອງໂຄງການກໍ່ສ້າງບຸກຄະລາກອນ ແມ່ນໄດ້ເຮັດໃຫ້ຄອບຄົວ ຂອງຂ້າພະເຈົ້າມີລາຍຮັບເພີ້ມຂຶ້ນ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ ແລະ ມີເວລາໄປເຮັດວຽກອື່ນຫຼາຍຂຶ້ນ ພ້ອມທັງຫຼຸດຜ່ອນ ແຮງງານ ແລະ ເວລາໄປຊອກຫາອາຫານຕາມ ທຳມະຊາດຄືເມື່ອກ່ອນ.

## ແຜນການໃນຕໍ່ໜ້າ.

- ຈະຂະຫຍາຍເນື້ອທີ່ສວນພືດອາຫານສັດອອກໃຫ້ໄດ້ 1 ເຮັກຕາ.
- ຈະສ້າງຄອກໃໝ່ເພື່ອລ້ຽງໝູ
- ຈະຊື້ໝູເຂົ້າມາລ້ຽງທອມໃຫ້ໄດ້ ຈຳນວນ 4 ຄັ້ງຕໍ່ໄປ ເພື່ອທອມຂາຍ.

ສາມາດຕິດຕໍ່ໄດ້ທີ່.

ບ່ອນປະຈຳການ: ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງຜາອຸດົມ, ແຂວງບໍ່ແກ້ວ

ນາງ ໝູ.ຈັນທະວີສຸກ

ໂທລະສັບ: 020 6843189

Australian Government
Australian Centre for International Agricultural Research

# ໂຄງການ ເຜີຍແຜ່ວິທີການທີ່ເໝາະສົມ ໃນການຂະຫຍາຍ ການລ້ຽງສັດໃນ ເຂດພາກເໜືອ ຂອງ ສປປ ລາວ




## ມີຖົ່ວສະໄຕໂລເຮັດໃຫ້ຂ້ອຍມີເວລາ ໄປເຮັດວຽກອື່ນ

ຈັດຕັ້ງປະຕິບັດໂດຍ ກອງສົ່ງເສີມກະສິກຳ - ປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ສ ປ ປ ລາວ

ກ.ສ.ກ.ປ NAFES

Charles Sturt University
INSTITUTE FOR LAND, WATER AND SOCIETY

ທ້າວ ຄຳ ອາຍຸ 55 ປີ ຊົນເຜົ່າລະເມດເປັນຄົນຖິ່ນຖານບ້ານເດີມຢູ່ບ້ານນາໂຮມ, ເມືອງຜາອຸດົມ, ແຂວງ ບໍ່ແກ້ວ ຊຶ່ງເປັນບ້ານ ຕັ້ງຢູ່ເທດສະບານເມືອງ ໃນຄອບຄົວຂອງລາວມີຄົນທັງໝົດ 6 ຄົນ ໃນນັ້ນມີແຮງງານຕົ້ນຕໍ 2 ຄົນ, ແຕ່ກ່ອນລາວມີອາຊີບໃນການ ຖາງປ່າເຮັດໄຮ່ ເພື່ອປູກເຂົ້າ, ໝາກງາ, ສາລີ ແລະ ເຮັດນາຕື່ມອີກ.

ທ້າວ ຄຳ ໄດ້ເວົ້າວ່າ : ຜ່ານມາຄອບຄົວຂອງພວກເຮົາແມ່ນມີແຮງງານບໍ່ພຽງພໍ, ລາຍຮັບໜ້ອຍ, ມີຄວາມທຸກຍາກ ແລະ ບໍ່ສາມາດສົ່ງລູກເຂົ້າໂຮງຮຽນໄດ້ ການປູກເຂົ້າ ແລະ ການລ້ຽງສັດກໍ່ບໍ່ໄດ້ຮັບຜົນ ການລ້ຽງສັດ ແມ່ນລ້ຽງປ່ອຍຕາມທຳມະຊາດ ແລະ ໃຊ້ເວລາໄປຫາອາຫານ ທຳມະຊາດແມ່ນໃຊ້ເວລາ 3-4 ຊົ່ວໂມງ ຈຶ່ງໄດ້ອາຫານມາໃຫ້ໝູ ຂອງລາວກິນ ນອກຈາກນັ້ນ ກໍ່ບໍ່ໄດ້ສັກຢາປ້ອງກັນ ແລະ ຂ້າແມ່ທ້ອງຈຶ່ງເຮັດໃຫ້ສັດຕາຍໂດຍທີ່ບໍ່ຮູ້ສາເຫດ.



ມາຮອດປີ 2006 ໂຄງການກໍ່ສ້າງບຸກຄະລາກອນ ເພື່ອພັດທະນາລະບົບການລ້ຽງສັດ ລະດັບຄອບຄົວ ໄດ້ເຂົ້າມາສົ່ງເສີມ ການປູກພືດອາຫານສັດ ໃນເຂດບ້ານນາໂຮມ ເຊິ່ງເປັນເຂດທົ່ງພຽງ ແລະ ມີອາກາດອົບອຸ່ນພໍສົມຄວນ ກິດຈະກຳທີ່ທາງໂຄງການໄດ້ມາສົ່ງເສີມ ແມ່ນການປູກພືດອາຫານສັດ (ຖົ່ວສະໄຕໂລ) ເພື່ອລ້ຽງໝູ ແລະ ລ້ຽງສັດອື່ນໆ ໃນເວລານັ້ນ ທ້າວ ຄຳ ພ້ອມກັບຄອບຄົວ ໄດ້ຕັດສິນໃຈເຂົ້າ ຮ່ວມກິດຈະກຳ ປູກພືດອາຫານສັດ ເພື່ອລ້ຽງໝູຂອງຕົນເອງ ລາວໃຊ້ເວລາໃນການໄປຕັດຖົ່ວສະໄຕໂລ ພຽງແຕ່ 1 ຊົ່ວໂມງເທົ່ານັ້ນ ຖ້າທຽບໃສ່ໃນເມື່ອກ່ອນແມ່ນຫຼຸດຜ່ອນເວລາຫຼາຍທີ່ສຸດ ແລະ ລາວຍັງມີເວລາໄປເຮັດວຽກອື່ນໆອີກ ຫຼັງຈາກນັ້ນລາວຈຶ່ງໄດ້ແນະນຳ ໃຫ້ກຸ່ມຂອງລາວ ຊຶ່ງມີສະມາຊິກ 8 ຄອບຄົວ ປູກພືດອາຫານສັດ ກຸ່ມດັ່ງກ່າວ ໄດ້ປູກພືດອາຫານສັດ ຈຳນວນ 4 ຊະນິດຄື : ຫຍ້າກີນີສີມ່ວງ, ຫຍ້າ ມູລາໂຕ, ຫຍ້າລູຊີ ແລະ ຖົ່ວສະໄຕໂລ ໃນເນື້ອທີ່ 0,4 ເຮັກຕາ ຕາມທີ່ນັກວິຊາການ ໂຄງການ ໄດ້ລົງມາແນະນຳ ເນື້ອ ທີ່ປູກຖົ່ວສະໄຕໂລຂອງ ທ້າວ ຄຳ ມີປະມານ 900 ແມັດມົນທົນ.

ໃນຕົ້ນປີ 2007 ທາງນັກວິຊາການ ໄດ້ລົງມາແນະນຳວິທີການຕັດສຳລັບເອົາໄປເກືອສັດ ການຕັດຕ້ອງໃຫ້ ຫ່າງຈາກໜ້າດິນປະມານ 20 ຊັງຕີແມັດ ວິທີການຊອຍຖົ່ວສະໄຕໂລໃຫ້ມີຂະໜາດ 1 ນິ້ວ ແລະ ວິທີປະສົມຖົ່ວສະໄຕໂລ ກັບອາຫານພື້ນບ້ານ ສຳລັບເກືອໝູ ທ້າວ ຄຳ ມີໝູຈຳນວນ 2 ໂຕ ລາວໄດ້ລ້ຽງໂດຍໃຊ້ຖົ່ວສະໄຕໂລ ປະສົມກັບຮຳໃຫ້ກິນ ໃນອັດຕາ

ສ່ວນປະສົມຄື : ຮໍາ 2 ກິໂລ ແລະ ຖົ່ວສະໄຕໂລ 4 ກິໂລ ປະສົມກັບນ້ຳໃນອັດຕາສ່ວນທີ່ເໝາະສົມໃຫ້ໝູກິນ ລາວລ້ຽງໄດ້ 4 ເດືອນ ຕົ້ນທືນໃນການຊື້ຮໍາມາທອມ ໝູທັງໝົດ 400,000 ກີບໃນຈໍານວນໝູ 2 ໂຕ ລາວໄດ້ຂາຍອອກ 1 ໂຕ ໄດ້ເງິນຈໍານວນ 810,000 ກີບ ນອກຈາກນີ້ ລາວຍັງຮັກສາໝູແມ່ 1 ໂຕໄວ້ເປັນແມ່ພັນ ຕໍ່ມາໝູເກີດລູກໄດ້ 9 ໂຕ ແລະ ລາວໄດ້ຂາຍລູກໝູນ້ອຍ ທີ່ເກີດອອກມາໃໝ່ ເປັນຈໍານວນເງິນ 2,800,000 ກີບ.



ມາຮອດໃນປີ 2008 ທ້າວ ຄໍາ ໄດ້ນໍາໃຊ້ບົດຮຽນ ແລະ ປະສົບປະການທີ່ໄດ້ຮັບຈາກໂຄງການ ລາວລ້ຽງໝູເພີ້ມຂຶ້ນ ແລະ ເຮັດໃຫ້ລາວສາມາດມີລາຍຮັບຈາກການຂາຍໝູ 4,400,000 ກີບ ແລະ ຈາກການຂາຍໄກ່ 500,000 ກີບ .

## ຄໍາຄິດເຫັນ ລາວໄດ້ເວົ້າວ່າ:

ທ້າວ ຄໍາ ດີໃຈຫຼາຍ ທີ່ທາງທີມງານໂຄງການເຂົ້າມາຊ່ວຍແນະນໍາ ວິທີການປູກພືດອາຫານສັດເຊັ່ນ: ຫຍ້າ ແລະ ຖົ່ວສະໄຕໂລ ສໍາລັບນໍາໃຊ້ ໃນການລ້ຽງສັດ, ຊຶ່ງເຮັດໃຫ້ຂ້າພະເຈົ້າ ມີລາຍໄດ້ເພີ່ມໃນການຂາຍໝູເຖິງ 4,400,000 ກີບ ແລະ ຈາກການຂາຍໄກ່ 500,000 ກີບ.

ເຮັດໃຫ້ຊີວິດການເປັນຢູ່ ຂອງຄອບຄົວດີຂື້ນ, ນອກຈາກນີ້ ກໍ່ຍັງມີເວລາໄປທໍາມາຫາກິນ ແລະ ເຮັດວຽກອັນອື່ນໄດ້ອີກດ້ວຍ ແລະ ຂ້ອຍກໍ່ໄດ້ຫຼຸດຜ່ອນໃນການໄປຖາງປ່າເຮັດໄຮ່ລິງ ເທື່ອລະກ້າວໂດຍຫັນເອົາການລ້ຽງໝູ ເປັນລາຍຮັບເພີ້ມຂອງຄອບຄົວ ຈົນຮອດປະຈຸບັນນີ້.



## ແຜນການໃນຕໍ່ໜ້າ:

1. ຂະຫຍາຍສວນພືດອາຫານສັດໃຫ້ກວ້າງ 1 ໄລ່.
2. ປັບປຸງລະບົບຄອກໝູໃຫ້ໄດ້ມາຕະຖານ ແລະ ຊື້ໝູເຂົ້າມາທອມ 10 ໂຕ / ປີ.
3. ຈະມີການຈັດການຂ້າແມ່ທ້ອງ ແລະ ສັກຢາວັກຊີນ ອະຫິວາໝູກ່ອນ ຈະເອົາມາທອມຢູ່ໃນຄອກ ຈາກການລວບລວມເງິນ ທີ່ໄດ້ຮັບມາຈາກຫຼາຍແຫຼ່ງລາວ ສາ ມາດຊື້ເຂົ້າກິນ, ເຄື່ອງ ນຸ່ງຮົ່ມ ແລະ ລາວຍັງສາມາດມີເງິນແຮ່ໄວ້ເພື່ອປິ່ນປົວໃນເວລາເຈັບເປັນ.




ສາມາດຕິດຕໍ່ໄດ້ທີ່:

- ບ່ອນປະຈໍາການ: ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງຜາອຸດົມ, ແຂວງບໍ່ແກ້ວ
- ທ່ານ ໂຕ້ ໄຊຍະວົງ
- ເບີໂທ. 020 5092363